# ໂຮງຫມໍສູນກາງ

## ສູນປິ່ນປົວຕາມຄວາມຮຽກຮ້ອງຕ້ອງການແລະສາກົນ

ທີ່ຢູ່: 3 ໂງກວ່ຽນ, ນະຄອນເຫວ້ - ໂທລະສັບ: (84.54) 3890888
ແຟກ: (84.54) 3845355 * ອີເມວ: hue_interhosp@hueimc.vn











ມາດຕະຖານສູງ,ເອົາໃຈໃສ່ຢ່າງສຸດໃຈເພື່ອສຸຂະພາບຂອງຊຸມຊົນ

## ຄຳນຳ

ປະຕິບັດແຜນນະໂຍບາຍຂອງພັກແລະລັດຖະບານກ່ຽວກັບນະໂຍບາຍຫັນເປັນສັງຄົມໃນຂະແໜງສາທາລະນະສຸກ, ໂຮງໝໍສູນກາງເຫວ້ໄດ້ລົງທຶນກໍ່ສ້າງສູນປິ່ນປົວຕາມຄວາມຕ້ອງການແລະຕຶກສາກົນໄດ້ເລີ່ມເຄື່ອນໄຫວເປັນທາງການນັບແຕ່ເດືອນ 7 ປີ 2014.

ຕຶກສາກົນໄດ້ກໍ່ສ້າງຕາມມາດຕະຖານສາກົນປະກອບອຸປະກອນ, ເຄື່ອງມືທີ່ທັນສະໄໝຮັບໃຊ້ໃນການບົ່ງມະຕິພະຍາດແລະປິ່ນປົວ.

ມາທີ່ຕຶກສາກົນຄົນເຈັບຈະໄດ້ຮັບການກວດເຊັກສຸຂະ,ໃຫ້ຄຳປຶກສາແລະປິ່ນປົວໂດຍບັນດາສາດສະດາຈານ,ທ່ານໝໍທີ່ມີປະສົບການສູງ, ເຊິ່ງໄດ້ຮັບການກໍ່ສ້າງລົງເລິກບັນດາຂະແໜງຈາກບັນດາໂຮງໝໍທີ່ໜ້າເຊື່ອຖືຕ່າງໆທັງໃນແລະຕ່າງປະເທດທົ່ວໂລກຄົນເຈັບຈະໄດ້ໃກ້ຊິດກັບການບໍລິການດ້ານສາທາລະນະສຸກທີ່ມີຄຸນນະພາບສູງ "ປອດໄພ-ວ່ອງໄວ-ປະສິດທິຜົນ".

ຫ້ອງຄົນເຈັບປະກອບດ້ວຍເຄື່ອງຂອງອຳນວຍຄວາມສະດວກຄົບວົງຈອນ, ພ້ອມດ້ວຍການຕິດຕາມເບິ່ງແຍງຈາກບັນດາພະຍາບານທີ່ມີປະສົບການເຊິ່ງຈະນຳເອົາຄວາມສະດວກສະບາຍຄວາມເພິ່ງພໍໃຈມາໃຫ້ທ່ານຕະຫຼອດລະຍະເວລາການປິ່ນປົວ.

ພວກຂ້າພະເຈົ້າຫວັງຢ່າງຍິ່ງວ່າການກຳເນີດຂອງຕຶກສາກົນຈະຕອບສະໜອງຄວາມຮຽກຮ້ອງຕ້ອງການນັບມື້ນັບສູງທາງດ້ານການກວດເຊັກສຸຂະພາບແລະປິ່ນປົວພະຍາດທີ່ມີຄຸນນະພາບດີທີ່ສຸດໃຫ້ແກ່ຄົນເຈັບທັງພາຍໃນແລະຕ່າງປະເທດ.







## ເຊື່ອໝັ້ນໃນຄວາມເປັນມືອາຊີບ

### ທ່ານໝໍ

ດ້ວຍທີມງານທີ່ມີກວ່າ 100ທ່ານໝໍເຊິ່ງເປັນບັນດາຊ່ຽວຊານທີ່ໜ້າເຊື່ອຖືມີລະດັບສາດສະດາຈານ, ຮອງສາດສະດາຈານ,ປະລິນຍາເອກ, ຊ່ຽວຊານຂັ້ນII...ເຊິ່ງມີປະສົບການການເຮັດວຽກທີ່ໂຮງໝໍສູນກາງເຫວ້ແລະບັນດາສູນການແພດສາກົນ, ໄດ້ຍົກສູງເຕັກນິກການແພດທີ່ກ້າວໜ້າຕ່າງໆທົ່ວໂລກຢ່າງຕໍ່ເນື່ອງ.ບັນດາທ່ານໝໍຈະຕອບສະໜອງການບໍລິການຕ່າງໆດ້ານສາຂາລະນະສຸກທີ່ມີຄຸນະພາບສູງແລະເຮັດໃຫ້ຄົນເຈັບເພິ່ງພໍໃຈ.

ໃນທ່າອ່ຽງຂອງການຮ່ວມມືດ້ານສາຂາລະນະສຸກ ຕຶກສາກົນໄດ້ຜັນຂະຫຍາຍ ການດຶງດູດບັນດາຜູ້ຊ່ຽວຊານຕ່າງປະເທດ (ຝຣັ່ງ, ອາເມລິກາ...) ມາກວດແລະເຮັດວຽກທີ່ຕຶກສາກົນເປັນປະຈຳ.

### ພະຍາບານ

ມີຮູບແບບບໍລິການທີ່ມີປະສົບການໄດ້ຮັບການກໍ່ສ້າງທີ່ສົມບູນແບບກ່ຽວກັບການເບິ່ງແຍງບົວລະບັດ ໃຫ້ການປຶກສາດ້ານການກິນຢູ່, ກາຍຍະພາບໍາບັດ ພ້ອມດ້ວຍຄວາມເອົາໃຈໃສ່ຢ່າງໝົດຈິດໝົດໃຈຈະຊ່ວຍໃຫ້ລົດຜ່ອນຄວາມກັງວົນ, ເຈັບປວດກ່ຽວກັບພະຍາດຊ່ວຍໃຫ້ຄົນເຈັບກັບສູ່ຊີວິດປະຈໍາວັນຢ່າງໄວວາ.





## ຮັບຕ້ອນ - ເບິ່ງແຍງລູກຄ້າ

ສະຖານທີ່ຕ້ອນຮັບກວ້າງຂວາງ, ປອດໂປ່ງແລະອຳນວຍຄວາມສະດວກ ເຊິ່ງໄດ້ຖືກຈັດວາງຢ່າງຕໍ່ເນື່ອງກັບລະບົບກວດພະຍາດເຂດນອກເຊິ່ງຈະເຮັດໃຫ້ແກ່ຄົນເຈັບແລະຍາດຕິພີ່ນ້ອງຄວາມຮູ້ສຶກໄວ້ວາງໃຈ. ຢູ່ທີ່ສະຖານທີ່ຮັບຕ້ອນພະນັກງານເບິ່ງແຍງລູກຄ້າພ້ອມທີ່ຈະຮັບຟັງຄວາມຮຽກຮ້ອງຕ້ອງການຂອງຄົນເຈັບແລະໃຫ້ຄຳແນະນຳຢ່າງຮອບຄອບແລະໝົດໃຈໃນຕະຫຼອດຂະບວນການກວດພະຍາດ.

## ໃຫ້ຄຳປຶກສາ

ມາທີ່ຕຶກສາກົນໃນບັນຍາກາດທີ່ອົບອຸ່ນໃກ້ຊິດຕິດແທດຂອງຫ້ອງໃຫ້ຄຳປຶກສາ. ຄົນເຈັບຈະໄດ້ຮັບຄຳປຶກສາກ່ຽວກັບການແພດຟຣີຈາກບັນດາທ່ານໝໍທີ່ມີປະສົບການແລະວິຊາການສູງໃນແຕ່ລະຂະແໜງທາງດ້ານວິຊາສະເພາະ.ຜູ້ຊ່ຽວຊານພ້ອມທີ່ຈະໃຫ້ຄຳປຶກສາຊ່ວຍເຫຼືອທ່ານ:

* ໃຫ້ຄຳແນະນຳໃນການເລືອກແພັກເກດການກວດເຊັກສຸຂະພາບທີ່ແທດເໝາະກັບຂະແໜງວິຊາສະເພາະ.

* ການກວດສຸຂະພາບຕາມເວລາກຳນົດຈະພົບເຫັນພະຍາດໄດ້ໄວໃຫ້ສ່ວນບຸກຄົນແລະສຳນັກງານ.

* ເລືອກເຟັ້ນ ບັນດາຊ່ຽວຊານຊັ້ນນຳມາກວດພະຍາດ ປິ່ນປົວ ແລະຜ່າຕັດຕາມຄວາມຮຽກຮ້ອງຕ້ອງການຂອງຄົນເຈັບ.

* ຄຳປຶກສາກ່ຽວກັບຄ່າວິເຄາະປິ່ນປົວຫຼືຜ່າຕັດແທດເໝາະກັບຄວາມສາມາດໃຊ້ຈ່າຍ.



## ກວດພະຍາດ

ລະບົບກວດພະຍາດເຂດນອກໄດ້ອອກແບບຢ່າງຕໍ່ເນື່ອງ, ທັນສະໄໝ ກັບບັນດາຫ້ອງກວດພາຍໃນ, ພາຍນອກ, ແມ່ແລະເດັກ, ຫົວໃຈ, ເນື້ອງອກ, ນໍລະສຸມ-ສຸກເສີນ, ໝາກໄຂ່ຫຼັງຫຼຸມ, ແຂ້ວ-ຄາງ-ໜ້າ, ຫູດັງຄໍ, ຕາ, ຜິວໜັງ...ອໍານວຍຄວາມສະດວກໃຫ້ແກ່ຄົນເຈັບເຄື່ອນຍ້າຍ, ຊ່ວຍລົດເວລາໃນການກວດແລະຮັບຜົນກວດ. ກ່ຽວກັບເຄື່ອງມືການແພດທີ່ໃໝ່, ຄົບວົງຈອນແລະທັນສະໄໝຄື MRI, CT.scan, CT.ConeBeam,ເອໂກສີ4D, ສ່ອງກ້ອງພາຍໃນ......ໃນການບົ່ງມະຕິຮູບພາບ, ສໍາຫຼວດການເຮັດວຽກ, ວິເຄາະລວມແມ່ນຜູ້ຊ່ຽວຊານທີ່ໄດ້ຜ່ານການກໍ່ສ້າງທັງພາຍໃນແລະຕ່າງປະເທດເປັນຜູ້ປະຕິບັດເຮັດໃຫ້ມີຜົນກວດທີ່ຊັດເຈນ, ວອ່ງໄວທ່ວງທັນຊ່ວຍເຫຼືອໃຫ້ແກ່ການບົ່ງມະຕິພະຍາດຂອງທ່ານໝໍ, ປິ່ນປົວແລະພົບເຫັນພະຍາດໄວ.

ພວກຂ້າພະເຈົ້າຫວັງວ່າຈະນໍາເອົາການບໍລິການ, ເບິ່ງແຍ່ງສຸຂະພາບທີ່ໄດ້ມາດຕະຖານສາກົນໃຫ້ແກ່ຄົນເຈັບກັບທຸກໄວ, ນັບແຕ່ເດັກ, ຜູ້ໃຫຍ່ຈົນຮອດຜູ້ທີ່ມີອາຍຸສູງໃນສະພາບແວດລ້ອມທີ່ປອດໄພ, ອົບອຸ່ນແລະເປັນກັນເອງ.

ໄລຍະເວລາຮັບຜົນກວດຢູ່ທີ່ບັນດາຫ້ອງກວດພະຍາດ:
ນັບແຕ່ວັນຈັນຮອດວັນເສົາ:ແຕ່ 7 ໂມງ ຮອດ 17 ໂມງ



  

ຄວາມຮັບຮູ້ແລະເອົາໃຈໃສ່ຂອງທ່ານໝໍພ້ອມດ້ວຍຮອຍຍິ້ມທີ່ເບີກບານແລະຜາມືທີ່ອ່ອນນ້ອມຂອງພະຍາບານໃນບັນຍາກາດທີ່ອົບອຸ່ນ, ສະບາຍໃຈຂອງຫ້ອງປິ່ນປົວຄົນເຈັບ, ພວກຂ້າພະເຈົ້າຫວັງຢ່າງຍິ່ງວ່າຄົນເຈັບຈະຫາຍເປັນປົກກະຕິໃນຄວາມເຊື່ອໝັ້ນເຂົ້າໃນຈັນຍາບັນຂອງແພດ.

## *ຂໍ້ມູນໃຫ້ແຕ່ລະຂະແໜງວິຊາສະເພາະ*

### ຂະແໜງພາຍນອກ

ເປັນສູນຜ່າຕັດແລະເຕັກນິກສູງທີ່ມີພຽບພອ້ມບັນດາຊ່ຽວຊານແຕ່ລະຂະແໜງສະເພາະຕ່າງໆເທົ່າທຽມກັບບັນດາສູນໃຫຍ່ໆໃນປະເທດແລະຂອບເຂດພາກພື້ນໄດ້ຢັ້ງຢືນເຄື່ອງໝາຍການແພດຂອງສູນຜ່າຕັດ.

ກໍລະນີດຳເນີນການຜ່າຕັດຫົວໃຈດ້ວຍເຕັກນິກຂັ້ນສູງຄື: ພະຍາດຫົວໃຈມາແຕ່ກຳເນີດ, ຫ້ອງເລືອດໄປສາມຫ້ອງ, ຫ້ອງເລືອດກັບໜຶ່ງຫ້ອງ, ປ່ຽນລີ້ນຫົວໃຈ, ຕໍ່ລັດເສັ້ນເລືອດປ່ຽນຖ່າຍອະໄວຍະວະ. ຜ່າຕັດຜ່ານກ້ອງ,ຮັກສາພະຍາດທາງເດີນອາຫານຕັບບີ. ຜ່າຕັດຜ່ານກ້ອງ, ປ່ຽນຂໍ້ທຽມສັນຍະກາ, ກະທົບກະດູກຂໍ້. ຜ່າຕັດສະຫຼາຍໜິ້ວໄຂ່ຫຼັງ, ຜ່າຕັດຕ່ອມລູກໝາກຜ່ານກ້ອງ. ພິເສດພວກເຮົາໄດ້ສ້າງແຟັກເກດປິ່ນປົວຜ່າຕັດຄົບຊຸດຄື:

ຜ່າຕັດລິດສະດວງLongo, ຜ່າຕັດໄສ້ຕິ່ງຜ່ານກ້ອງ, ຜ່າຕັດຖົງບີຜ່ານກ້ອງ, ສ້າງເສັ້ນເອັນຂໍ້ຫົວເຂົ່າຜ່ານກ້ອງເບື້ອງໜຶ່ງປ່ຽນຂໍ້ກະດູກໂພກເຄິ່ງສ່ວນ, ສະຫຼາຍໜິ້ວທໍ່ສິ່ງຜ່ານກ້ອງ, ຕັດອາມິດານ, ຊູດVA, ຜ່າຕັດເນື້ອງອກເຂດສາຍສຽງ, ຜ່າຕັດລະບົບການເຮັດວຽກຂອງໂກນດັງ+ ກຽມຝາຂັ້ນຜ່າກະດູກ+ຕາບເຈ້ຍຫູ.

### ໝາກໄຂ່ຫຼັງ*ທຽມ-ປ່ຽນຖ່າຍອະໄວຍະວະ*

ລະບົບເຄື່ອງຈັກແລ່ນໝາກໄຂ່ຫຼັງທຽມຊ່ວຍຟອກເລືອດໃຫ້ຄົນເຈັບໝາກໄຂ່ຫຼັງເຊື່ອມສະມັດຕະພາບຊຳເຮື້ອໄລຍະສຸດທ້າຍ, ຟອກເລືອດຮອບວຽນ, ກະກຽມຄົນເຈັບປ່ຽນຖ່າຍໝາກໄຂ່ຫຼັງແລະຟອກເລືອດສຸກເສີນໃຫ້ບັນດາກໍລະນີໝາກໄຂ່ຫຼັງເຊື່ອມສະມັດຕະພາບກະທັນຫັນ.

ກ່ຽວກັບບັນດາຄົນເຈັບທີ່ປ່ຽນຖ່າຍໝາກໄຂ່ຫຼັງ ວຽກສືບຕໍ່ການເບິ່ງແຍ່ງ ແລະປິ່ນປົວຢູ່ສະຖານແຫ່ງນີ້ ແມ່ນມີຄຸນະພາບການປິ່ນປົວທີ່ດີທີ່ສຸດ.

### *ຫົວໃຈ-ການແຊກແຊງ*

ການປິ່ນປົວບັນດາພະຍາດກ່ຽວກັບຫົວ, ຕັງຊົງ...ຖ່າຍເສັ້ນເລືອດຫົວໃຈ, ຂະຫຍາຍເສັ້ນເລືອດລ້ຽງຫົວໃຈດ້ວຍການໃສ່stent, ຕິດຕັ້ງເຄື່ອງກະຕຸ້ນຫົວໃຈແບບຖາວອນ, ກວດກາປິ່ນປົວໄຟຟ້າກ້າມເນື້ອຫົວໃຈ, ເຕັກນິກshockware. ປິ່ນປົວຂາດເລືອດກ້າມເນື້ອຫົວໃຈຊຳເຮື້ອ





## ເນື້ອງອກ

ຕ້ອນຮັບປິ່ນປົວທີ່ມີຫຼາຍຮູບແບບກັບ3ຂອບເຂດ: ຜ່າຕັດ, ສາຍແສງເລເຊີ, ປິ່ນປົວດ້ວຍເຄມີ, ນໍາໃຊ້ການປິ່ນປົວຮູບແບບໃໝ່ເຊິ່ງຈະນໍາມາສູ່ຜົນສໍາເລັດສູງໃນການປິ່ນປົວ. ເບິ່ງແຍ່ງຮອບດ້ານ, ປິ່ນປົວອາການຂອງຄົນເຈັບທີ່ເປັນມະເຮັງໄລຍະສຸດທ້າຍ

ຂະແໜງໄດ້ຕົກແຕ່ງບັນດາເຄື່ອງຈັກທີ່ທັນສະໄໝແລະພິເສດຄື: ສາຍລັງສີIntrabeam, ອັດຕາເລັ່ງລຸ້ນໃໝ່AXESSEELEKTAເທື່ອທໍາອິດຕິດຕັ້ງທີ່ຫວຽດນາມ.

## ຂະແໜງພາຍໃນ - *ລົ້ມລ່ອຍຢ່າງກະທັນຫັນ*

ປິ່ນປົວບັນດາພະຍາດພາຍໃນກ້າມເນື້ອກະດູກຂໍ້, ພະຍາດກ່ຽວກັບເລືອດ, ພະຍາດກ່ຽວກັບຕ່ອມປ່ອຍໃນ. ຊ່ວຍສຸກເສີນການອຸດຕັນຂອງເສັ້ນເລືອດສະໝອງດ້ວຍອຸປະກອນທັນສະໄໝພ້ອມເຕັກນິກໃໝ່:ວິທີການສະຫຼາຍໃຍເລືອດທາງເສັ້ນເລືອດດໍາ, ເສັ້ນເລືອດແດງ; ດູດເມັດເລືອດກ້າມດ້ວຍວິທີທາງກົນຈັກ.

ດໍາເນີນບັນດາເຕັກນິກສູງໃນການປິ່ນປົວເສັ້ນເລືອດສະໝອງ:
ໃສ່ Coil ປິດຖົງໂພງເສັ້ນເລືອດສະໝອງ, ປ່ອຍປຸມເປົ້າປິດຮູຮົ່ວເສັ້ນເລືອດແດງຂອງຄໍ, ສູບກາວເພື່ອໃຫ້ເສັ້ນເລືອດຕັນໃນAVMສະໝອງຫຼືອອກແອກ, ຮົ່ວເສັ້ນເລືອດແດງໃນເຫຍື່ອແຂງສະໝອງ.

## ນໍລະສຸມ - ສຸກເສີນ

ເຊີດຊູການປິ່ນປົວບັນດາພະຍາດທີ່ຮ້າຍແຮງດ້ວຍບັນດາເຄື່ອງຈັກຊ່ວຍເຫຼືອບັນດາລະບົບການເຮັດວຽກຂອງຮ່າງກາຍທີ່ທັນສະໄໝ.

ຕ້ອນຮັບບັນດາຄົນເຈັບທີ່ເຂົ້າມາປິ່ນປົວທີ່ຫ້ອງສຸກເສີນ.

## ເບິ່ງແຍງ,ກາຍະພາບບໍາບັດ

ໃນການເບິ່ງແຍງພະຍາບານແມ່ນຮັບໜ້າທີ່ສໍາຄັນໃນການຟື້ນຟູຂອງຄົນເຈັບ. ດ້ວຍພະນັກງານພະຍາບານທີ່ມີຄວາມຊໍານານ, ບໍລິການດ້ວຍຄວາມເຕັມໃຈ, ເບິ່ງແຍງຄົນເຈັບສຸດຄວາມສາມາດ,ລະອຽດລະອໍ, ຍິນດີຕອບສະໜອງບັນດາຄວາມຮຽກຮ້ອງຕ້ອງການທີ່ຈໍາເປັນຂອງຄົນເຈັບໃນໄລຍະເວລາທີ່ນອນຮັກສາຢູ່ໂຮງໝໍ, ຊ່ວຍເຫຼືອສະພາບແນວຄິດແລະຮ່າງກາຍ, ກາຍະພາບບໍາບັດ, ຕອບສະໜອງແລະຕິດຕາມການກິນຢາ, ອະທິບາຍຫຼັກການປິ່ນປົວແລະແນະນໍາໃຫ້ຄົນເຈັບຮູ້ຈັກວິທີເບິ່ງແຍງແລະຮັກສາສຸຂະພາບຢູ່ເຮືອນພາຍຫຼັງອອກໂຮງໝໍ.





# ຄວາມສຸກທີ່ສົມບູນ

## ຂະແໜງຄອດບຸດ ແລະພະຍາດຍິງ

ໄດ້ຈັດວາງຕາມລະບົບຫ້ອງທີ່ເໝາະສົມຫ້ອງລໍຄອດ- ຫ້ອງຄອດ- ຫ້ອງຜ່າຕັດ- ຫ້ອງມໍລະສຸມຫຼັງຜ່າຕັດ- ຫ້ອງຄົນເຈັບຕາມແລວດຽວກັນສ້າງຄວາມສະດວກສູງສຸດ ເຊິ່ງນຳປະສິດທິຜົນສູງໃນການປິ່ນປົວໃຫ້ແກ່ບັນດາຍິງຖືພາ.

ທ່ານໝໍຈະໃຫ້ຄຳປຶກສາແກ່ທ່ານສະໜອງບັນດາຂໍ້ມູນທີ່ມີປະໂຫຍດຄື: ປຶກສາກ່ຽວກັບການຖືພາ, ບັນດາພະຍາດຍິງ, ກວດຫາມະເຮັງປາກມົດລູກແລະມະເຮັງຫຼືຜ່າຕັດດ້ວຍເຕັກນິກສູງບັນດາພະຍາດທີ່ກ່ຽວພັນເຖິງນົມແລະອະໄວຍະວະສືບພັນຂອງຜູ້ຍິງ.

ເພື່ອສ້າງເງື່ອນໄຂສະດວກໃຫ້ແກ່ຄົນເຈັບ,ພວກເຮົາໄດ້ຈັດສ້າງແພັກເກັດປິ່ນປົວຄົບຊຸດຄື: ຜ່າເອົາລູກ,ຜ່າຜ່ານກ້ອງ, ຜ່າກ້ອນເນື້ອແບບແຜເປີດ, GEUແບບຜ່າແຜເປີດ, ສ້າງຮີມອະໄວຍະວະເພດ, ສອ້ມແປງຮູບຮ່າງອະໄວຍະວະເພດຍິງ, ເກີດລູກທຳມະດາ.

ພິເສດແພັກເກັດຄອດທຳມະດາບໍ່ເຈັບແມ່ນການເລືອກເຟັ້ນທີ່ດີໃຫ້ແກ່ບັນດາຍິງຖືພາ.



  

## ການເປັນໝັນ

ໃນຖັນແຖວບັນດາທ່ານໝໍທີ່ມີປະສົບການໃນຂົງເຂດປິ່ນປົວການເປັນໝັນແລະໄດ້ຍົກລະດັບຕາມບັນດາເຕັກນິກທີ່ກ້າວໜ້າທີ່ສຸດຂອງໂລກຈະຊ່ວຍໃຫ້ບັນດາຄູ່ຜົວເມຍທີ່ບໍ່ສາມາດບັນລຸຄວາມຫວັງເປັນພໍ່ແມ່

ການຊ່ວຍເຫຼືອ ສືບພັນດຳເນີນບັນດາເຕັກນິກ:

ປະສົມທຽມ: ສູບອະສຸຈິ (ເຕັກນິກ IUI).

ປະສົມເຊື້ອໃນຫຼອດແກ້ວກຼາຊິກ (IVF ກຼາຊິກ).

ສັກອະສຸຈິເຂົ້າຊີໂຕປຼາສຂອງໄຂ່ (ICSI Intracytoplasmic Sperm Injection)..

ຜ່າຕັດເອົາອະສຸຈິ (TESE, PESA, MESA).

ປະສົມເຊື້ອໃນຫຼອດແກ້ວ-ຂໍໄຂ່/ປະສົມເຊື້ອໃນຫຼອດແກ້ວ-ຂໍອະສຸຈິ.

ICSI ກັບອະສຸຈິຈາກການຜ່າຕັດນ້ອຍທີ່ອະສຸຈິ, ICSI ກັບອະສຸຈິເກັບແຊ່ແຂງ.

ຍ້າຍໜໍ່ລູກເກັບມ້ຽນ.

ຊ່ວຍເຫຼືອໜໍ່ລູກທີ່ເສຍເຫຍື່ອຫຸ້ມ.

ດຳເນີນການເກັບແຊ່ແຂງໜໍ່ລູກແລະອະສຸຈິ ທີ່ທະນາຄານອະສຸຈິ.

ດຳເນີນການປະສົມເຊື້ອໃນຫຼອດແກ້ວ- ຖືພາແທນເພື່ອຈຸດປະສົງມະນຸດສະທຳ.







## ຫ້ອງຄົນເຈັບ

ຂະໜາດ300ຕຽງຄົນເຈັບກັບບັນດາຫ້ອງທີ່ໄດ້ມາດຕະຖານສາກົນໄດ້ຮັບການຕິດຕັ້ງເຄື່ອງມືການແພດທີ່ທັນສະໄໝ ພ້ອມດ້ວຍລະບົບລະບາຍທີ່ປອດໂປ່ງ ກວ້າງຂວາງ.

ທຸກໆຫ້ອງຄົນເຈັບລ້ວນແຕ່ປະກອບດ້ວຍໂທລະທັດທີ່ເຊື່ອມຕໍ່ເຄເບິນ,ໂທລະສັບສາຍຕົງ ເຊື່ອມຕໍ່ອິນເຕີເນັດຟຣີ, ແອເຢັນສ່ວນຕົວ, ກະດິ່ງກົດເອີ້ນພະຍາບານ.

ບໍລິການມ້ຽນມັດຫ້ອງຄົນເຈັບໄດ້ປະຕິບັດທຸກໆວັນຕາມມາດຕະຖານຫ້ອງຂອງໂຮງແຮມນຳຄວາມສະດວກສະບາຍໃຫ້ຄົນເຈັບໃນຊ່ວງເວລາປິ່ນປົວພາຍໃນໂຮງໝໍ.

ທ່ານຈະໄດ້ຮັບຄຳປຶກສາຈາກບັນດາທ່ານໝໍ, ພະຍາບານ. ໃຫ້ຄຳແນະນຳເລືອກຫ້ອງຕ່າງໆເຊັ່ນ: ຫ້ອງວີໄອພີ ຫ້ອງ 2 ຕຽງ, ຫ້ອງ 4 ຕຽງ ແທດເໝາະກັບຄວາມສາມາດໃຊ້ຈ່າຍຂອງເຮົາ.


ຫ້ອງ 2 ຕຽງ


ຫ້ອງ 4 ຕຽງ


ຫ້ອງວີໄອພີ







## ຫ້ອງອາຫານ

ທ່ານສາມາດຜ່ອນຄາຍໃນຂົງເຂດລໍຖ້າທີ່ມີຄວາມສະຫງົບງຽບເທິງຕັ່ງໂຊຟາທີ່ສະດວກສະບາຍທີ່ຫ້ອງອາຫານຢູ່ຊັ້ນ1. ຊີມບັນດາອາຫານທີ່ເປັນເອກະລັກຂອງເທວັກັບຄວາມເປັນມືອາຊີບຂອງຖັນແຖວພະນັກງານບໍລິການແລະນຳໃຊ້ບໍລິການອິນເຕີເນັດຟຣີ, ໜັງສືພິມ,ວາລະສານແລະໂທລະພາບຕິດຕັ້ງເຄເບີນ.

## ການຂົນສົ່ງຄົນເຈັບ

ລົດສົ່ງຕໍ່ຄົນເຈັບທີ່ໂຮງໝໍສູນກາງມາຫາຕຶກສາກົນ ລົດສຸກເສີນໃຫ້ບໍລິການໃຊ້ງານຕະຫຼອດ 24/7 ຕອບສະໜອງໃຫ້ວຽກງານຂົນສົ່ງຄົນເຈັບສຸກເສີນແລະໃນທຸກກໍລະນີ.

## ການຊ່ວຍເຫຼືອດ້ານພາສາ

ໜ່ວຍຊ່ວຍເຫຼືອດ້ານພາສາຂອງພວກເຮົາເວົ້າພາສາອັງກິດ, ຝຣັ່ງຢ່າງລ່ຽນໄຫຼໃນການແປໃຫ້ຄົນເຈັບແລະມີປະສົບການໃນວຽກງານການແປໃຫ້ຄົນເຈັບແລະທ່ານໝໍ, ຄຽງຄູ່ກັນນັ້ນພວກຂ້າພະເຈົ້າຍັງຕອບສະໜອງການບໍລິການແປພາສາ, ພາສາຍີ່ປຸ່ນ, ລາວ. ເມື່ອຄົນເຈັບມີຄວາມຕ້ອງການ.

## ບໍລິການອື່ນໆ

ບໍລິການຕຽງເສີມ, ຊັກລີດແລະ ອົບແຫ້ງ, ບໍລິການດອກໄມ້ສົດ, ຈັດກິນອາຫານທີ່ຫ້ອງໃຫ້ຄົນເຈັບ. ກຽມພ້ອມໃຫ້ບໍລິການທ່ານໄດ້ຕະຫຼອດເວລາ.



# ໂຮງໝໍສູນກາງ

## ສູນປິ່ນປົວຕາມຄວາມຮຽກຮ້ອງຕ້ອງການແລະສາກົນ


ທີ່ຢູ່: 3 ໂງກວ່ຽນ, ນະຄອນເຫວ້ - ໂທລະສັບ: (84.54) 3890888

ແຟກ: (84.54) 3845355 * ອີເມວ: hue_interhosp@hueimc.vn





## ແຜ່ນວາດໂດຍລວມ/ສະຖານທີ່ຕິດຕໍ່ພົວພັນ

| Block C | Block B | Block A | |
|---|---|---|---|
| ·ຂະແໜງຫົວໃຈແລະເສັ້ນເລືອດ ☎ 8629 | ·ຄະນະອຳນວຍການ ☎ 8632<br>·ຫ້ອງບໍລິຫານ ☎ 8777 | ·ຂະແໜງພາຍໃນ ☎ 8635 | ຊັ້ນ6 |
| ·ຂະແໜງເນື້ອງອກແລະມະເຮັງ ☎ 8426<br>·ຂະແໜງຫົວໃຈແລະເສັ້ນເລືອດ ☎ 8625 | ·ຂະແໜງວາງຢາສະລົບແລະມໍລະສຸມ ☎ 8427<br>· ຫ້ອງຜ່າຕັດ ☎ 8530 | ·ຂະແໜງພາຍໃນ ☎ 8535 | ຊັ້ນ 5 |
| ·ຂະແໜງເນື້ອງອກແລະມະເຮັງ ☎ 8426 | · ຫ້ອງຍະສູດ ☎ 8431<br>·ຂະແໜງວາງຢາສະລົບແລະມໍລະສຸມ ☎ 8427<br>· ຫ້ອງຜ່າຕັດ ☎ 8427 | ·ຂະແໜງພະຍາດຍິງ ☎ 8435 | ຊັ້ນ4 |
| ·ຂະແໜງພາຍນອກ ☎ 8339 | ·ຂະແໜງພາຍນອກ ☎ 8341 | ·ຂະແໜງພະຍາດຍິງ ☎ 8345 | ຊັ້ນ3 |
| ·ຫ້ອງເຮັກໂກ້ - ຫ້ອງຊ່ອງໄຟ ☎ 8212 - 8209 | · ໝາກໄຂ່ຫຼັງທຽມ ☎ 8225 | ·ຂະແໜງຕັດຕໍ່ອະໄວຍະວະ ໝາກໄຂ່ຫຼັງທຽມ ☎ 8240<br>·ກວດ ແຂ້ວ-ຄາງກະໄຕ-ໜ້າ ☎ 8233<br>·ກວດ ຫູ-ດັງ-ຄໍ ☎ 8236 | ຊັ້ນ2 |
| ·ຫ້ອງອາຫານ ☎ 8222<br>·ຫ້ອງກວດເລືອດຄົບວົງຈອນ ☎ 8102<br>·ຂະແໜງການຢາ ☎ 8120 | ·ຄ່າໂຮງໝໍ ☎ 8122<br>·ບໍລິການລູກຄ້າ ☎ 8125<br>·ຂະແໜງກວດພະຍາດ ☎ 8126<br>·ຂະແໜງວິນິໄສຮູບພາບ ☎ 8107<br>·ເຮືອນຢາ ☎ 8119 | ·ຫ້ອງໃຫ້ຄຳແນະນຳ ☎ 8126<br>·ຂະແໜງສຸກເສີນ,ມໍລະສຸມ ☎ 8127<br>·ການແຊກແຊງຫົວໃຈ-ເສັ້ນເລືອດ ☎ 8133 | ຊັ້ນ1 |